# ແຮງງານເດັກໃນອາຊີ

## ແຮງງານເດັກແມ່ນຫຍັງ?

- ແຮງງານເດັກຄື: ວຽກທຸກຮູບແບບທີ່ກະທຳໂດຍເດັກອາຍຸຕ່ຳກວ່າກຳໜົດ ໄວ້ໃນ ມາດຕະຖານຂອງ ILO ສຳຫຼັບວຽກນັ້ນໆ.
- ຮູບແບບທີ່ໂຫດຮ້າຍທີ່ສຸດຂອງແຮງງານເດັກຄື:ການຕົກເປັນທາດແຮງງານຂັດໜີ້, ໂສເພນີ, ສື່ລາມົກ ອານາຈານ, ການບັງຄັບຈັດຫາແຮງງານເດັກເພື່ອການສົງຄາມ ການໃຊ້ເດັກໃນການຄ້າຢາເສບຕິດ ແລະ ກິດຈະກຳທີ່ຜິດກົດໝາຍອື່ນໆ ແລະ ວຽກອື່ນໆ ທີ່ນ້າຈະເປັນອັນຕະລາຍຕໍ່ສຸຂະພາບ ຄວາມປອດໄພ ແລະ ສິນລະທຳຂອງເດັກຍິງ ແລະ ເດັກຊາຍທີ່ມີອາຍຸຕ່ຳກວ່າ 18 ປີ.

## ສະຖານນະການຂອງແຮງງານເດັກແມ່ນຫຍັງ?

- ເມື່ອໄວໆ ນີ້ ILO ໄດ້ປະມານການໄວ້ວ່າ ມີເດັກອາຍຸລະຫວ່າງ 5-17 ປີ ປະມານ 246 ລ້ານຄົນທົ່ວໂລກເຮັດວຽກທີ່ຈັດວ່າເປັນແຮງງານເດັກ. ໃນຈຳນວນນີ້ມີເດັກປະມານ 179 ລ້ານຄົນທີ່ຢູ່ໃນສະພາບ ຂອງແຮງງານເດັກໃນຮູບແບບທີ່ໂຫດຮ້າຍທີ່ສຸດ.
- ເດັກປະມານ 2.5 ລ້ານຄົນມີສ່ວນຮ່ວມທາງເສດຖະກິດໃນປະເທດພັດທະນາແລ້ວ, ມີ 2.4 ລ້ານຄົນ ໃນປະເທດທີ່ເສດຖະກິດປ່ຽນຜ່ານ,127.3 ລ້ານຄົນ ໃນອາຊີປາຊີຟິກ, 17.4 ລ້ານຄົນ ໃນລາຕິນອາເມລິກາ ແລະ ຄາລິບປຽນ, 48 ລ້ານຄົນ ໃນ ອາຟີລິກາຕອນໃຕ້ ແລະ 13.4 ລ້ານຄົນ ໃນຕາເວັນອອກກາງ ແລະ ອາຟີລິກາເໜືອ
- ພູມິພາກອາຊີປາຊີຟິກມີຈຳນວນເດັກ(ອາຍຸ 5-14 ປີ) ມີສ່ວນຮ່ວມ ຢ່າງຂັນແຂງໃນເສດຖະກິດຫຼາຍທີ່ສຸດໂດຍເປັນຈຳນວນ 127 ລ້ານຄົນ ຫຼືຮ້ອຍລະ 60 ຂອງຈຳນວນລວມທັງໝົດ

- ເດັກອາຍຸຕໍ່າກວ່າ 18 ປີ ຕ້ອງປະສົບອັນຕະລາຍບາງປະການ ດັ່ງຕົວຢ່າງເຊັ່ນ: ໃນສາຫະລັດອາເມລິກາ ອັດຕາເດັກ ແລະ ຜູ້ເຍົາທີ່ໄດ້ຮັບບາດເຈັບຈາກການ ເຮັດວຽກ ຕໍ່ຫນຶ່ງຊົ່ວໂມງ ສູງເກືອບເຖິງສອງເທົ່າ ຂອງຜູ້ໃຫຍ່ ແລະ ເຊັ່ນດຽວກັນ ຈາກຜົນ ການສໍາຫລວດເດັກອາຍຸ 13-17 ປີໃນປະເທດເດັນມາກ, ຟິນແລນ, ນໍເວ ແລະ ສະວີເດັນ ໃນປີ 1998 ພົບວ່າມີອັດຕາການບາດເຈັບລະຫວ່າງຮ້ອຍລະ 3-19 ຂອງເດັກທີ່ ເຮັດວຽກທັງກ່ອນ ແລະ ຫຼັງເລີກຮຽນ. ຢູ່ໃນປະເທດທີ່ພັດທະນາ ນອກຈາກນັ້ນຜົນການສຶກສາຂອງ ILO ພົບວ່າໃນປະເທດກໍາລັງພັດທະນາມີອັດຕາສະເລ່ຍຂອງການບາດເຈັບ ແລະ ເຈັບປ່ວຍຈາກການເຮັດວຽກຕໍ່ເດັກ 100 ຄົນ ມີອັດຕາຕໍ່າສຸດຮ້ອຍລະ 12 ໃນພາກກະສິກໍາ (ສໍາຫຼັບເດັກຜູ້ຊາຍ) ໄປຈົນເຖິງຮ້ອຍລະ 35 (ສໍາຫຼັບເດັກແມ່ຍິງ) ໃນພາກກໍ່ສ້າງ.
- ໃນປະເທດໄທ ການຄ້າມະນຸດມີມູນຄ່າຕໍ່ປີສູງເຖິງ 5 ແສນລ້ານບາດ ຫຼືປະມານ ຮ້ອຍລະ 50-60 ຂອງງົບປະມານປະຈໍາປີຂອງພາກລັດ ແລະ ເມື່ອເບິ່ງໃນເຊີງທຸລະກິດ ການຄ້າເດັກແມ່ນເຮັດລາຍໄດ້ ສູງກວ່າການຄ້າສາເສບຕິດ.
- ໃນປີ 1996 ຄາດປະມານວ່າມີແຮງງານເດັກຕ່າງປະເທດເຖິງ 194,180 ຄົນເຮັດວຽກໃນປະເທດ ໄທ ໂດຍເດັກສ່ວນໃຫຍ່ແມ່ນມາຈາກປະເທດມຽນມ້າ, ລາວ ແລະ ກໍາປູເຈຍ. ຮ້ອຍລະ 70 ເປັນເດັກຜູ້ ຊາຍທີ່ເຮັດວຽກກໍ່ສ້າງ ຫຼືໃນຮ້ານຄ້າ ໂຮງງານ ຫຼືຕາມບ້ານນ້ອຍໆ.
- ແມ່ຍິງຊາວຈີນສ່ວນໃຫຍ່ຖືກຂາຍມາຈາກ ມົນທົນຢູນນານ ແລະ ຖືກນໍາມາຂາຍເພື່ອເຮັດວຽກໃນອຸດສາຫະກໍາທາງເພດໃນປະເທດໄທ
- ໃນໄຈເປີ (Jaipur) ອິນເດຍ ມີເດັກປະມານ 13,000 ຄົນເຮັດວຽກ ໃນອຸດສາຫະກໍາເຈຍລະໃນເພັດພອຍ.
- ຄາດປະມານວ່າມີເດັກ 18,000 ຄົນເຮັດວຽກໃນບໍ່ແຮ່ຂະໜາດນ້ອຍໃນປາປົວນິວກີນີ ແລະ ຄາດວ່າມີ ແຮງງານເດັກ 9,300 ຄົນ ແລະ 2,180 ຄົນເຮັດວຽກປະເພດນີ້ໃນຟີລິບປິນ ແລະ ອິນໂດເນເຊຍ ຕາມ ລໍາດັບ.
- ໃນຈາກາຕ້າ ຄາດວ່າມີເດັກ 70,700 ຄົນ ເຮັດວຽກຮັບໃຊ້ໃນເຮືອນ. ຈາກຜົນການສໍາຫລວດຂອງສໍານັກງານສະຖິຕິກາງເມື່ອໄວໆນີ້ ລະບຸວ່າຈໍານວນແຮງງານເດັກ (ອາຍຸລະຫວ່າງ 10-14 ປີ) ທັງຫມົດໃນອິນໂດເນເຊຍມີ 2.3 ລ້ານຄົນ.

- ຄາດວ່າມີເດັກ 1,160 ຄົນເຮັດວຽກງານປະມົງ (Jermals) ໃນຟີລິປິນ ຫຼືອາດ ມີເດັກເຖິງປີລະ 2,900 ຄົນທີ່ຖືກຊັກຊວນໃຫ້ມາເຮັດວຽກໃນງານປະມົງ.
- ໃນບັງຄະລາເທດມີເດັກປະມານ 6.3 ລ້ານຄົນເຮັດວຽກໃນຮູບແບບຕ່າງໆ ເຖິງ 300 ຮູບແບບ ໃນຈຳ ນວນນີ້ມີວຽກ 45 ຮູບແບບທີ່ຖືກຈັດ ວ່າເປັນວຽກອັນຕະລາຍສຳຫຼັບເດັກນ້ອຍ.
- ຄາດວ່າມີເດັກ 3.3 ລ້ານຄົນທີ່ມີສ່ວນຮ່ວມໃນທາງເສດຖະກິດໃນປາກິດສະຖານ.

**ການດຳເນີນການ- ຕົວຢ່າງ**

ໂຄງການລະຫວ່າງປະເທດວ່າດ້ວຍການແກ້ໄຂປັນຫາແຮງງານເດັກ (ILO/IPEC) ເປັນແຜ່ນງານການ ຮ່ວມມືທາງວິຊາການດ້ານແຮງງານເດັກທີ່ໃຫຍ່ທີ່ສຸດໃນໂລກ. ນັບຕັ້ງແຕ່ ເລີ້ມໂຄງການໃນປີ 1992 ໂຄງ ການ IPEC ທີ່ດຳເນີນການໃນທົ່ວ 75 ປະເທດ ໄດ້ມີອິດທິພົນ ຫຼວງຫຼາຍໃນການຊ່ວຍເຫຼືອເດັກນັບແສນຄົນ ເພື່ອໃຫ້ຫລຸດພົ້ນ ຈາກສະຖານປະກອບການ ແລະ ຍັງຊ່ວຍປຸກ ຈິດສຳນຶກສາທາລະນະຊົນໃຫ້ຄຳນຶງຕໍ່ປັນຫາ ລວມທັງຊ່ວຍສ້າງສະມັດທະນະ ຂອງສະຖາບັນຕ່າງໆ ໃຫ້ມີຄວາມຮັບຜິດຊອບຕໍ່ເດັກ ຕົວຢ່າງ ຂອງໂຄງການ IPEC ມີດັ່ງນີ້ **ເນປານ**-ໃນປີ 1998-1999 IPEC ໄດ້ຊ່ວຍເຫຼືອເດັກ 4,000 ຄົນຈາກວຽກອັນຕະລາຍ ແລະ ຍັງຊ່ວຍຟື້ນຟູ ແລະ ບູລານາການໃຫ້ເດັກກັບສູ່ສັງຄົມ. ມີແຮງງານເດັກກວ່າ 3,700 ຄົນໄດ້ມີ ໂອກາດສຶກສາໃນ ລະບົບພິເສດ/ນອກໂຮງຮຽນ ແລະ ກວ່າ 2,500 ຄົນໄດ້ຮັບ ການສະຫນັບ ສະຫນູນໃຫ້ເຂົ້າສຶກສາໃນລະບົບປົກກະຕິ.

**ບັງຄະລາເທດ-**ໂຄງການ IPEC ເລີ້ມຕັ້ງແຕ່ປີ 1995 ໂດຍຜູ້ຜະລິດ ເສື້ອຜ້າທັງຫມົດໃນບັງຄະລາເທດໄດ້ ໃຫ້ສັນຍາທີ່ຈະໃຫ້ໂຮງງານຂອງຕົນປອດຈາກແຮງງານເດັກ ແລະ ອີກສາມປີຕໍ່ມາຈຳນວນແຮງງານເດັກໃນພາກ ນີ້ກໍ່ຫລຸດລົງຈາກເກົ່າເກືອບ 10,000 ຄົນໃນປີ 1995 ເຫຼືອ 1,500 ຄົນໃນປີ ພ.ສ. 1998 ດ້ວຍການດຳເນີນງານທີ່ເນັ້ນການ ຄວບຄຸມກວດສອບ ແລະ ການຟື້ນຟູກັບສູ່ສັງຄົມໃຫ້ແກ່ເດັກ ແລະ ອາໃສຄວາມຮ່ວມມືລະຫວ່າງ ນາຍຈ້າງ ລັດຖະບານ ແລະ ອົງການສະຫະປະຊາຊາດຫຼາຍອົງກອນ.

**ປາກິດສະຖານ-** ຕັ້ງແຕ່ເດືອນສິງຫາ 2000 ໄດ້ມີການອອກແບບໂຄງການເພື່ອປ້ອງກັນ ແລະ ກຳຈັດ ແຮງງານເດັກໃນການຜະລິດຫມາກບານໃນເຂດຊຽວຄອດ (Sialkot) ໂດຍເນັ້ນ ການ

ກວດສອບຄວບຄຸມສະຖາບັນປະກອບການ ແລະ ການໃຫ້ທາງເລືອກແກ່ເດັກ ແລະ ຄອບຄົວ ລວມທັງການສຶກສາຂັ້ນພື້ນຖານ, ການຝຶກວິຊາຊີບ ແລະ ອາຊີບເບື້ອງຕົ້ນ ການສາທາລະນະ ສຸກຂັ້ນພື້ນຖານ ແລະ ໂອກາດໃນການມີລາຍໄດ້. ຈົນປັດຈຸບັນນີ້ ສູນຍົບເຄື່ອງກວ່າຮ້ອຍລະ 90 ແຫ່ງໃນຊຽວຄອດກຳລັງຖືກກວດສອບ ແລະ ມີເດັກປະມານ 6,019 ຄົນໄດ້ເຂົ້າ ຮຽນໃນການສຶກສານອກລະບົບທີ່ຫາກໍ່ເລີ່ມຕົ້ນຂຶ້ນ ຕະລອດຈົນມີເດັກ 3,229 ຄົນ ໄດ້ຮັບການເບິ່ງແຍງສຸຂະ ພາບພ້ອມ

**ອານຸສັນຍາ**

ອານຸສັນຍາຂອງ ILO ສະບັບທີ່ 138 ວ່າດ້ວຍອາຍຸຂັ້ນຕ່ຳ ປີ 1973 ໄດ້ຮັບການ ໃຫ້ສັດ ຕະຍາບັນຈາກ 116 ປະເທດ. ເປົ້າໝາຍຂອງອານຸສັນຍາ ນີ້ຄືການ ກຳຈັດ ແຮງງານເດັກ ໃຫ້ໝົດສິ້ນໄປຢ່າງມີປະສິດທິຜົນ ສຳລັບແຮງງານເດັກອາຍຸຕ່ຳກ່ວາອາຍຸ ທີ່ຈົບ ການສຶກສາ ພາກບັງຄັບຫລືອາຍຸຕ່ຳກ່ວາ 15 ປີບໍ່ວ່າກໍລະນີໃດໆ.

ອານຸສັນຍາວ່າດ້ວຍແຮງງານເດັກໃນຮູບແບບທີ່ຮຸນແຮງທີ່ສຸດ ຂອງ ILO, ໃນປີ 1999 ( ສະບັບທີ່ 182) ໄດ້ຖືກອະນຸມັດໂດຍ 117 ປະເທດ, ເຊິ່ງເປົ້າໝາຍ ແມ່ນເລັງ ໄປສູ່ການກຳຈັດ ການໃຊ້ແຮງງານເດັກທີ່ມີອາຍຸຕ່ຳກ່ວາ 18 ປີ ໃນຮູບແບບທີ່ຮຸນແຮງ.

**ມາດຕະຖານແຮງງານລະຫວ່າງປະເທດທີ່ກ່ຽວຂ້ອງອື່ນໆ**

ມາດຕະຖານແຮງງານລະຫວ່າງປະເທດທີ່ກ່ຽວຂ້ອງອື່ນໆໄດ້ແກ່ອານຸສັນຍາຂອງສະຫະປະຊາຊ າດ ວ່າດ້ວຍສິດທິເດັກ ທີ່ກຳນົດສາລະສຳຄັນກ່ຽວກັບສິດທິທາງເສດຖະກິດ, ພົນລະເມືອງ, ວັດທະນາທຳ ແລະ ສັງຄົມຂອງເດັກ ແລະ ໄດ້ຮັບການໃຫ້ສັດຕະຍາບັນ ຈາກສະມາຊິກ ສະຫະປະຊາຊາດ ເກືອບທຸກປະເທດ ຍົກເວັ້ນ ສອງປະເທດເທົ່ານັ້ນ. ຄະນະກຳມະການວ່າ ດ້ວຍສິດທິເດັກ ເຮັດໜ້າທີ່ຕິດຕາມກວດສອບ ອານຸສັນຍາວ່າດ້ວຍສິດທິເດັກ ແລະ ວິທີການ ເລືອກຮັບອານຸສັນຍາສະບັບນີ້ (2000) ທີ່ຂະຫຍາຍຂອບເຂດການປະຕິບັດຂອງ ອານຸສັນຍາ ໃຫ້ຄວບຄຸມເຖິງການຂາຍເດັກ, ໂສເພນີເດັກ ໃນສື່ລາມົກອານາຈານ ແລະ ການນຳເດັກເຂົ້າ ຮ່ວມສົງຄາມ.

*ທີ່ມາ:ILO. ລາຍງານລະດັບໂລກ:ອະນາຄົດທີ່ປັດສະຈາກເດັກ, ລາຍງານສະບັບທີ 1(ບີ)ສະໄຫມປະຊຸມທີ 90 ຄ.ສ.2002, IPEC ສຳນັກງານແຮງງານລະຫວ່າງປະເທດປະຈຳພູມິພາກອາຊີປາຊີຟິກ:ການສະຫລຸບກ່ຽວກັບການຄ້າມະນຸດໃນອະນຸພູມິພາກລຸ່ມແມ່ນ້ຳຂອງ, IPEC ເອກກະສານແຈກ, IPEC ແຜນງານເພື່ອຕໍ່ສູ້ແຮງງານເດັກໃນພາກປະມົງໃນອິນໂດເນເຊຍ ແລະຟີລິບປິນ,ລາຍງານຂ່າວແຮງງານເດັກຂອງການຍ່າງເດີນຂະບວນສາກົນເພື່ອຕໍ່ຕ້ານແຮງງານເດັກ, 1 ເມສາ ປີ ຄ.ສ.2002, ຫາໄດ້ທີ່ http://www.globalmarch.org/clns/index.html, UNICEF (ຄ.ສ.2001) "ລສຍໄດ້ຈາກການກິດຊີ້: ການສືບສວນການກິດຊີ້ທາງເພດເດັກ" ການສຳຫຼວດຂອງກະຊວງແຮງງານ, ບັງຄະລາເດັດ, ແລະລາຍງານການດຳເນີນງານຂອງປະເທດຕາມໂຄງການ IPEC ຂອງບັງຄະລາເດັດ.*